ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ບົດລາຍງານຂອງຄະນະບໍລິຫານ ແລະ ບົດລາຍງານການເງິນທີ່ໄດ້ກວດສອບຕາມ
ກົດໝາຍການບັນຊີ ແລະ ລະບຽບການບັນຊີທີ່ກ່ຽວຂ້ອງທີ່ຮັບຮອງໂດຍ ທະນາຄານ
ແຫ່ງ ສປປ ລາວ

ວັນທີ 31 ທັນວາ 2013

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1
ບົດລາຍງານຂອງຄະນະບໍລິຫານ	2
ບົດລາຍງານຂອງຜູ້ກວດສອບເອກະລາດ	3 - 4
ໃບລາຍງານຜົນໄດ້ຮັບ	5
ໃບສະຫຼຸບຊັບສິນບັດ	6 - 9
ໃບລາຍງານສ່ວນປ່ຽນແປງຂອງທຶນ	10
ໃບລາຍງານກະແສເງິນສົດ	11 - 12
ເອກະສານຊ້ອນທ້າຍບົດລາຍງານການເງິນ	13 - 31

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ຂໍ້ມູນທົ່ວໄປ

ສາຂາ

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ ("ສາຂາ") ໄດ້ສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດລົງທຶນເລກທີ 4116 ໂດຍ ກະຊວງແຜນການ ແລະ ການລົງທຶນ ຂອງ ສປປ ລາວ ໃນວັນທີ 10 ພະຈິກ 2011 ແລະ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດເລກທີ 068/ທຫລ ໂດຍ ທະນາຄານແຫ່ງ ສປປ ລາວ (ທຫລ) ໃນວັນທີ 27 ມັງກອນ 2012. ສາຂາໄດ້ເລີ່ມເປີດໃຫ້ບໍລິການຢ່າງເປັນທາງການເລີ່ມແຕ່ວັນທີ 3 ກຸມພາ 2012.

ສາຂາມີທຶນປະກອບໃນເບື້ອງຕົ້ນແມ່ນ 99,703,119,863 ກີບ ແລະ ທຶນທີ່ໄດ້ຖອກແລ້ວ ນະວັນທີ 31 ທັນວາ 2013 ແມ່ນ 175,883,224,873 ກີບ. (ນະວັນທີ 31ທັນວາ 2012: 175,883,224,873 ກີບ)

ກິດຈະກຳຕົ້ນຕໍຂອງສາຂາ ແມ່ນການບໍລິການລະດົມເງິນຝາກໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວຈາກອົງການຈັດຕັ້ງຕ່າງໆ ແລະ ບຸກຄົນ. ປ່ອຍສິນເຊື່ອໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວຈາກຫຼາຍພາກສ່ວນເຊັ່ນ: ອົງການຈັດຕັ້ງຕ່າງໆ ແລະ ບຸກຄົນຕາມຄວາມສາມາດທາງດ້ານແຫຼ່ງທຶນຂອງສາຂາ. ການດຳເນີນທຸລະກິດທີ່ກ່ຽວຂ້ອງກັບສະກຸນເງິນຕາຕ່າງປະເທດ; ການບໍລິການທາງດ້ານການເງິນ ແລະ ການບໍລິການທາງທະນາຄານອື່ນໆທີ່ໄດ້ຮັບການອະນຸຍາດຕາມ ທຫລ ວາງອອກ.

ສາຂາຕັ້ງຢູ່ບ້ານເລກທີ 029, ຖະໜົນ ຊຸນບຸລົມ, ເມືອງ ວັດຈັນ, ນະຄອນຫຼວງວຽງຈັນ, ສປປ ລາວ.

ຄະນະບໍລິຫານ

ຄະນະບໍລິຫານພາຍໃນປີ ແລະ ນະມື້ອອກ ບົດລາຍງານສະບັບນີ້ປະກອບດ້ວຍ:

ຊື່ ແລະ ນາມສະກຸນ	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ເລ ເງາະ ນ໋ຳ	ຜູ້ຈັດການສາຂາ	ແຕ່ງຕັ້ງວັນທີ 12 ທັນວາ 2012
ທ່ານ ຫງຽນ ສອນ ຫຸ່ງ	ຮອງຜູ້ຈັດການສາຂາ	ແຕ່ງຕັ້ງວັນທີ 12 ທັນວາ 2012
ທ່ານ ຫງຽນ ຕາຍ ຫງຽນ	ຮອງຜູ້ຈັດການສາຂາ	ແຕ່ງຕັ້ງວັນທີ 6 ກັນຍາ 2012

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງສາຂາພາຍໃນປີ ແລະ ນະມື້ອອກ ບົດລາຍງານສະບັບນີ້ແມ່ນ ທ່ານ ເລ ເງາະ ນ໋ຳ ຜູ້ຈັດການສາຂາ.

ຜູ້ກວດສອບ

ຜູ້ກວດສອບຂອງບັນຊີ ສາຂາ ແມ່ນ ບໍລິສັດ ເອິນ ແອນ ຢັ໋ງ ລາວ ຈຳກັດ.

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງສາຂາມີຄວາມຍິນດີໃນການນຳສະເໜີບົດລາຍງານການເງິນຂອງສາຂາສຳລັບປີສິ້ນສຸດ 31 ທັນວາ 2013.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ບົດລາຍງານຖານະການເງິນ

ຄະນະບໍລິຫານມີໜ້າທີ່ຮັບຜິດຊອບຕໍ່ການກະກຽມບົດລາຍງານການເງິນທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງ, ຜົນໄດ້ຮັບຈາກການດຳເນີນການບໍລິການ ແລະ ກະແສເງິນສົດໃນປີການບັນຊີໂດຍສອດຄ່ອງກັບກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການບັນຊີບັນຊີທີ່ກ່ຽວຂ້ອງທີ່ຮັບຮອງໂດຍ ທະນາຄານ ແຫ່ງ ສປປ ລາວ. ໃນການສ້າງ ບົດລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຂອງສາຂາຈະຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນນະໂຍບາຍດ້ານການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ປະຕິບັດແຕກຕ່າງຈາກມາດຕະຖານໄດ້ເປີດເຜີຍ ແລະ ອະທິບາຍຢູ່ໃນບົດລາຍງານການເງິນ; ແລະ
- ກະກຽມບົດລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນແຕ່ທາງສາຂາຫາກຕັ້ງຂໍ້ສົມມຸດຕິຖານ ຫຼື ຄາດຄະເນວ່າສາຂາບໍ່ສາມາດທີ່ຈະດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງເຊິ່ງໄດ້ເປີດເຜີຍຖານະການເງິນຂອງສາຂາຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບບັນຊີທີ່ໄດ້ນຳໃຊ້. ນອກນັ້ນ ຄະນະບໍລິຫານຍັງຕ້ອງຮັບຜິດຊອບຕໍ່ການຮັກສາຊັບສົມບັດຄົງທີ່ຂອງສາຂາ ແລະ ຮັບປະກັນວ່າສາຂາມີຂັ້ນຕອນກວດສອບທີ່ເໝາະສົມເພື່ອປ້ອງກັນການສໍ້ໂກງ ຫລື ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມບົດລາຍງານການເງິນສຳລັບປີສິ້ນສຸດ 31 ທັນວາ 2013.

ການຮັບຮອງເອົາບົດລາຍງານການເງິນ

ຄະນະບໍລິຫານຂໍຮັບຮອງວ່າ, ບົດລາຍງານການເງິນໄດ້ສະແດງຖານະການເງິນລວມທັງ ຜົນປະກອບການ ແລະ ກະແສເງິນສົດ ຂອງສາຂາ ນະວັນທີ 31 ທັນວາ 2013 ຖືກຕ້ອງ ແລະ ເໝາະສົມສອດຄ່ອງກັບກົດໝາຍການບັນຊີ ແລະ ລະບຽບການທີ່ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ.

ຕາງໜ້າຄະນະບໍລິຫານ:

ທ່ານ ເລ ເງາະ ນ້ຳ
ผู้จัดการสาขา

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2014

Ernst & Young Lao Limited
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : + 856 21 455 077
Fax: + 856 21 455 078
ey.com

Building a better working world

ເລກທີອ້າງອີງ : 61023820/16627988

ບົດລາຍງານຂອງຜູ້ກວດສອບເອກະລາດ

ຮຽນ: ຜູ້ຖືຮຸ້ນຂອງທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບບົດລາຍງານການເງິນຂອງທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ ເຊິ່ງ ລວມມີໃບສະຫຼຸບຊັບສິນບັດ ນະວັນທີ 31 ທັນວາ 2013, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງຂອງທຶນສຳລັບປີສິ້ນສຸດວັນທີ 31 ທັນວາ 2013 ແລະ ເອກະສານຊ້ອນທ້າຍຂອງບົດລາຍງານການເງິນ ເຊິ່ງໄດ້ອະທິບາຍລາຍລະອຽດແຕ່ໜ້າທີ 4 ຫາ 31.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ບົດລາຍງານການເງິນ

ຄະນະບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີບົດລາຍງານການເງິນຢ່າງຖືກຕ້ອງໂດຍສອດຄ່ອງກັບ ກົດໝາຍການບັນຊີ ແລະ ລະບຽບການບັນຊີທີ່ກ່ຽວຂ້ອງທີ່ອາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ. ຄວາມ ຮັບຜິດຊອບ ດັ່ງກ່າວລວມມີ: ການອອກແບບ, ການຈັດຕັ້ງປະຕິບັດ, ການດຳເນີນການຄວບຄຸມພາຍໃນທີ່ກ່ຽວກັບການກະກຽມ ແລະ ນຳສະເໜີບົດລາຍງານການເງິນທີ່ຖືກຕ້ອງ ແລະ ປາສະຈາກການລາຍງານຜິດພາດອັນເນື່ອງມາຈາກການສໍ້ໂກງ ຫລື ຂໍ້ຜິດພາດ; ການເລືອກເຟັ້ນ ແລະ ການນຳໃຊ້ນະໂຍບາຍການບັນຊີທີ່ແທດເໝາະ ແລະ ການຄາດຄະເນຕົວເລກທາງການບັນຊີທີ່ສົມເຫດສົມຜົນ ຕາມສະພາບການ.

ຄວາມຮັບຜິດຊອບຂອງຜູ້ກວດສອບ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນການອອກຄຳເຫັນກ່ຽວກັບບົດລາຍງານການເງິນເຫຼົ່ານີ້ ໂດຍອີງໃສ່ຜົນການກວດ ສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງຕາມມາດຕະຖານສາກົນດ້ານການກວດສອບ. ມາດຕະຖານເຫຼົ່ານີ້ໄດ້ ຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັນຍັດດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການກວດສອບເພື່ອໃຫ້ໄດ້ການຮັບປະກັນຢ່າງສົມເຫດສົມຜົນວ່າ ບົດລາຍງານການເງິນປາສະຈາກການລາຍງານຜິດພາດ.

ການກວດສອບໄດ້ກ່ຽວພັນເຖິງຂັ້ນຕອນການດຳເນີນງານໃນການເກັບກຳຫຼັກຖານດ້ານການກວດສອບກ່ຽວກັບຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນຕ່າງໆໃນບົດລາຍງານການເງິນ. ຂັ້ນຕອນການຄັດເລືອກຈະຂຶ້ນກັບການວິນິໄສຂອງຜູ້ກວດສອບລວມ ເຖິງການປະເມີນຄວາມສ່ຽງຂອງການລາຍງານທີ່ຜິດພາດໃນບົດລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫລື ຂໍ້ຜິດພາດ. ໃນການດຳເນີນການປະເມີນຄວາມສ່ຽງດັ່ງກ່າວ, ຜູ້ກວດກວດສອບຈະພິຈາລະນາການຄວບຄຸມພາຍໃນຂອງສາຂາທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີບົດລາຍງານການເງິນທີ່ຖືກຕ້ອງທີ່ສຸດກັບຄວາມເປັນຈິງ ເພື່ອທີ່ຈະອອກແບບວິທີການກວດສອບທີ່ແທດເໝາະຕາມສະພາບການ. ແຕ່ບໍ່ແມ່ນເພື່ອຈຸດປະສົງໃນການສະແດງຄຳເຫັນກ່ຽວກັບປະສິດທິຜົນຂອງ ການບໍລິຫານພາຍໃນຂອງສາຂາ. ການກວດສອບຍັງລວມມີການປະເມີນຂອບເຂດທີ່ແທດເໝາະຂອງນະໂຍບາຍການບັນຊີທີ່ນຳໃຊ້ ແລະ ການຄາດຄະເນອັນເໝາະສົມທາງການບັນຊີທີ່ສ້າງຂຶ້ນໂດຍຄະນະຜູ້ບໍລິຫານກໍ່ຄື ການປະເມີນການນຳສະເໜີ ໂດຍລວມກ່ຽວກັບບົດລາຍງານການເງິນຂອງສາຂາ.

ພວກຂ້າພະເຈົ້າເຊື່ອວ່າບັນດາຫຼັກຖານດ້ານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບນັ້ນແມ່ນແທດເໝາະ ແລະ ພຽງພໍສຳລັບ ເປັນພື້ນຖານໃນການອອກຄຳເຫັນດ້ານການກວດສອບຂອງພວກຂ້າພະເຈົ້າ.

EY
Building a better working world

ຄຳເຫັນ

ໃນຄຳເຫັນຂອງພວກຂ້າພະເຈົ້າ, ບົດລາຍງານການເງິນສະບັບນີ້ໄດ້ສະແດງຖານະການເງິນຂອງ ສາຂາຖືກຕ້ອງຕາມພາບພົດຕົວຈິງ ນະວັນທີ 31 ທັນວາ 2013 ລວມທັງ ຜົນປະກອບການ ແລະ ກະແສເງິນສົດສຳລັບປີສິ້ນສຸດ 31 ທັນວາ 2013 ໂດຍສອດຄ່ອງຕາມກົດໝາຍການບັນຊີ ຂອງ ສປປ ລາວ ແລະ ລະບຽບການບັນຊີທີ່ກ່ຽວຂ້ອງອອກໂດຍ ທະນາຄານແຫ່ງ ສປປ ລາວ.

Ernst & Young

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2014

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ບົດລາຍງານຜົນໄດ້ຮັບ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2013

ລຳດັບ	ລາຍການ	ເອກະສານຊ້ອນທ້າຍ	2013 ກີບ	*ສຳລັບໄລຍະແຕ່ວັນທີ 3/2/2012 ຫາ 31/12/2012 ກີບ*
A.	**ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ**			
1.	**ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ**	3	**24,127,448,457**	**8,874,545,671**
1.1	ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນລະຫວ່າງທະນາຄານ		1,048,973,762	1,999,858,516
1.2	ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກລູກຄ້າ		23,078,474,695	6,874,687,155
2.	**ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ**	3	**(5,886,296,457)**	**(2,549,145,007)**
2.1	ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນລະຫວ່າງທະນາຄານ		(4,587,279,960)	(1,389,917,316)
2.2	ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍໃຫ້ລູກຄ້າ		(1,299,016,497)	(1,159,227,691)
I.	**ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ**	3	**18,241,152,000**	**6,325,400,664**
3	ລາຍຮັບຄ່າທຳນຽມ ແລະ ການບໍລິການ	4	2,235,110,553	1,637,061,560
4	ລາຍຈ່າຍຄ່າທຳນຽມ ແລະ ການບໍລິການ	4	(142,833,014)	(80,553,553)
5	ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ	5	1,028,345,736	606,431,830
II.	**ລາຍຮັບສຸດທິຈາກການດຳເນີນງານ**		**21,361,775,275**	**8,488,340,501**
B	**ລາຍຮັບ ແລະ ລາຍຈ່າຍອື່ນໆ**			
6	**ລາຍຮັບຈາກການດຳເນີນງານອື່ນໆ**	6	**255,883,424**	**115,782,866**
7	**ລາຍຈ່າຍບໍລິຫານ**		**(9,971,413,621)**	**(6,306,450,388)**
7.1	ເງິນເດືອນ ແລະ ຄ່າໃຊ້ຈ່າຍໃຫ້ແກ່ພະນັກງານ	7	(4,809,649,930)	(3,462,334,724)
7.2	ລາຍຈ່າຍບໍລິຫານອື່ນໆ	8	(5,161,763,691)	(2,844,115,664)
8	**ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ**		**(1,339,231,871)**	**(377,463,115)**
9	**ລາຍຈ່າຍອື່ນໆຈາກການດຳເນີນງານ**	9	**(1,301,915,850)**	**(1,098,869,012)**
10	**ຕັ້ງເງິນແຮສະເພາະ/(ເກັບຄືນ) ສຳລັບລູກຄ້າສິນເຊື່ອ**		-	-
10.1	ເງິນແຮສະເພາະສຳລັບລູກຄ້າສິນເຊື່ອ		-	-
10.2	ເກັບຄືນເງິນແຮສະເພາະສຳລັບລູກຄ້າສິນເຊື່ອ		-	-
III.	**ກຳໄລທັ້ງໝົດກ່ອນອາກອນ**		**9,005,097,357**	**821,340,852**
11	**ອາກອນກຳໄລພາຍໃນປີ**	18	(2,161,223,366)	(231,400,830)
IV.	**ກຳໄລຫຼັງຫັກອາກອນ**		**6,843,873,991**	**589,940,022**

ກະກຽມໂດຍ:

ທ່ານ ນາງ ເດືອງ ທິ ທັນ ທຸຍ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ເຈີ ເຈີ ຢ
ຜູ້ຈັດການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2014

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ໃບສະຫຼຸບຊັບສິນບັດ
ນະວັນທີ 31 ທັນວາ 2013

ລຳດັບ	*ຊັບສິນ*	*ເອກະສານຊ້ອນທ້າຍ*	*31 ທັນວາ 2013 ກີບ*	*31 ທັນວາ 2012 ກີບ*
I	**ເງິນສົດ ແລະ ເງິນຝາກຢູ່ ທຫລ**		**77,473,613,497**	**22,916,135,897**
1	ເງິນສົດໃນກຳມື	10	3,409,005,803	1,947,076,237
2	ເງິນຝາກຢູ່ ທຫລ	11	74,064,607,694	20,969,059,660
II	**ໜີ້ຕ້ອງຮັບຈາກທະນາຄານອື່ນ**	12	**76,830,270,756**	**44,710,551,908**
1	ເງິນຝາກກະແສລາຍວັນ	12.1	60,430,270,756	3,560,551,908
2	ເງິນຝາກມີກຳນົດ	12.2	16,400,000,000	41,150,000,000
III	**ເງິນກູ້ ແລະ ເງິນລ່ວງໜ້າສຳລັບລູກຄ້າ (ຫັກຫຼັງເງິນຜະສະເພາະ)**	13	**404,293,783,069**	**195,981,734,169**
IV	**ຊັບສິນບັດຄົງທີ່**	14	**76,784,116,245**	**64,976,994,751**
1	ຊັບສິນບັດທີ່ພວມກໍ່ສ້າງ		1,607,143,872	-
2	ຊັບສິນບັດຄົງທີ່ບໍ່ມີຕົວຕົນ	14.1	71,274,510,000	62,423,550,000
3	ຊັບສິນບັດຄົງທີ່ມີຕົວຕົນ	14.2	3,902,462,373	2,553,444,751
V	**ຊັບສິນອື່ນໆ**		**5,709,123,064**	**2,160,962,133**
1	ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ		440,636,894	863,836,133
2	ຊັບສິນອື່ນໆ	15	5,268,486,170	1,297,126,000
	ລວມຊັບສິນ		**641,090,906,631**	**330,746,378,858**

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2013

ລຳດັບ	ໜີ້ສິນ ແລະ ທຶນ	ເອກະສານຊ້ອນທ້າຍ	31 ທັນວາ 2013 ກີບ	31 ທັນວາ 2012 ກີບ
I	**ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ**	**16**	**329,799,355,483**	**107,742,549,232**
1	ເງິນຝາກກະແສລາຍວັນ		147,878,966,158	1,160,139,574
2	ເງິນຝາກມີກຳນົດ		147,123,680,000	106,582,409,658
3	ເງິນກູ້ຢືມຈາກທະນາຄານອື່ນ		33,667,200,000	-
4	ໜີ້ທີ່ຕ້ອງສົ່ງໃຫ້ທະນາຄານອື່ນ		1,129,509,325	-
II	**ໜີ້ຕ້ອງສົ່ງໃຫ້ລູກຄ້າ**	**17**	**123,682,219,273**	**43,489,035,289**
1	ເງິນຝາກກະແສລາຍວັນ, ເງິນຝາກປະຢັດ ແລະ ເງິນຝາກມັດຈຳ		103,282,831,907	34,800,140,409
2	ເງິນຝາກມີກຳນົດ		20,399,387,366	8,653,244,679
3	ໜີ້ທີ່ຕ້ອງສົ່ງອື່ນໃຫ້ລູກຄ້າ		-	35,650,201
III	**ໜີ້ສິນອື່ນໆ**		**2,555,867,422**	**2,061,720,761**
1	ດອກເບ້ຍຄ້າງຈ່າຍ		1,635,350,237	889,861,304
2	ອາກອນຕ້ອງຈ່າຍໃຫ້ລັດ	18	311,565,850	229,421,120
3	ໜີ້ຕ້ອງສົ່ງອື່ນໆ	19	608,951,335	942,438,337
	ລວມໜີ້ສິນທັງໝົດ		**456,037,442,178**	**153,293,305,282**
IV	**ທຶນ ແລະ ຄ້ຳສຳຮອງ**		**185,053,464,453**	**177,453,073,576**
1	ທຶນຈົດທະບຽນ	20	175,883,224,873	175,883,224,873
2	ຄ້ຳສະສົມຕາມລະບຽບການ		743,381,401	58,994,002
3	ຄ້ຳແຮທົ່ວໄປສຳລັບກິດຈະກຳສິນເຊື່ອ	13.2	2,021,468,915	979,908,681
4	ກຳໄລສະສົມ		6,405,389,264	530,946,020
	ທຶນທັງໝົດ		**185,053,464,453**	**177,453,073,576**
	ລວມຍອດໜີ້ສິນ ແລະ ທຶນ		**641,090,906,631**	**330,746,378,858**

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2013

ລຳດັບ	ລາຍການນອກໃບສະຫຼຸບຊັບສິນບັດ	ເອກະສານຊ້ອນທ້າຍ	31 ທັນວາ 2013 ກີບ	31 ທັນວາ 2012 ກີບ
I	**ຄຳໝັ້ນສັນຍາທີ່ໄດ້ໃຫ້**			
A	**ຄຳໝັ້ນສັນຍາກ່ຽວກັບການສະໜອງທຶນ**		**392,529,129,732**	**342,328,291,646**
1	ຄຳໝັ້ນສັນຍາສະໜອງທຶນໃຫ້ກັບທະນາຄານອື່ນ		-	-
2	ຄຳໝັ້ນສັນຍາສະໜອງທຶນໃຫ້ກັບລູກຄ້າ		392,529,129,732	342,328,291,646
B	**ຄຳໝັ້ນສັນຍາການຄ້ຳປະກັນ**		**4,497,737,670**	-
1	ຄຳໝັ້ນສັນຍາການຄ້ຳປະກັນໃຫ້ກັບທະນາຄານອື່ນ		-	-
2	ຄຳໝັ້ນສັນຍາການຄ້ຳປະກັນໃຫ້ກັບລູກຄ້າ		4,497,737,670	-
	ລວມຄຳໝັ້ນສັນຍາທີ່ໄດ້ໃຫ້		**397,026,867,402**	**342,328,291,646**

ລຳດັບ	ລາຍການນອກໃບສະຫຼຸບຊັບສິນບັດ	ເອກະສານຊ້ອນທ້າຍ	31 ທັນວາ 2013 ກີບ	31 ທັນວາ 2012 ກີບ
II	**ຫຼັກຊັບຄ້ຳປະກັນ ແລະ ມັດຈຳ**			
A	**ຫຼັກຊັບຄ້ຳປະກັນ ແລະ ມັດຈຳກ່ຽວກັບເງິນກູ້**		**763,045,847,401**	**220,871,509,052**
1	ຫຼັກຊັບຄ້ຳປະກັນ ແລະ ມັດຈຳກ່ຽວກັບ ເງິນກູ້ຕໍ່ ທະນາຄານອື່ນ		-	-
2	ຫຼັກຊັບຄ້ຳປະກັນ ແລະ ມັດຈຳກ່ຽວກັບ ເງິນກູ້ຕໍ່ລູກຄ້າ		763,045,847,401	220,871,509,052
B	**ຫຼັກຊັບຄ້ຳປະກັນ ແລະ ມັດຈຳກ່ຽວກັບການ ຮັບປະກັນ**		**749,330,598,601**	**385,804,150,001**
3	ຫຼັກຊັບຄ້ຳປະກັນ ແລະ ມັດຈຳກ່ຽວກັບ ການ ຮັບປະກັນ ຕໍ່ທະນາຄານອື່ນ		-	-
4	ຫຼັກຊັບຄ້ຳປະກັນ ແລະ ມັດຈຳກ່ຽວກັບ ການ ຮັບປະກັນຕໍ່ລູກຄ້າ		749,330,598,601	385,804,150,001
	ລວມຫຼັກຊັບຄ້ຳປະກັນ ແລະ ມັດຈຳ		**1,512,376,446,002**	**606,675,659,053**

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2013

ກະກຽມໂດຍ:

ທ່ານ ນາງ ເດືອງ ທິ ທັນ ທຸຍ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ເລ ເງາະ ນ້ຳ
ຜູ້ຈັດການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2014

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ໃບລາຍງານການປ່ຽນແປງຂອງທຶນ

ສຳລັບປີສິ້ນສຸດວັນທີ 31 ທັນວາ 2013

	ທຶນຈົດທະບຽນທີ່ຖອກແລ້ວ ກີບ	*ຄ້າງສະສົມຕາມລະບຽບການ ກີບ*	*ຄ້າງແຮສຳລັບກິດຈະກຳສິນເຊື່ອ ກີບ*	*ກຳໄລສະສົມ ກີບ*	*ລວມຍອດ ກີບ*
ຍອດຫຼືອນະວັນທີ 1 ມັງກອນ 2013	**175,883,224,873**	**58,994,002**	**979,908,681**	**530,946,020**	**177,453,073,576**
ກຳໄລສຸດທິໃນປີ	-	-	-	6,843,873,991	6,843,873,991
ຈັດສັນເຂົ້າທຶນສຳຮອງຕາມລະບຽບພາຍໃນປີ	-	684,387,399	-	(684,387,399)	-
ຈັດສັນເຂົ້າເງິນໂບນັດ ແລະ ສະຫວັດດີການພາຍໃນປີ (ຈັດປະເພດເປັນໜີ້ສິນອື່ນໆ)	-	-	-	(285,043,348)	(285,043,348)
ລາຍຈ່າຍເງິນແຮທົ່ວໄປສຳລັບສິນເຊື່ອພາຍໃນປີ	-	-	1,301,915,850	-	1,301,915,850
ເກັບຄືນລາຍຈ່າຍເງິນແຮທົ່ວໄປສຳລັບສິນເຊື່ອພາຍໃນປີ	-	-	(255,883,424)	-	(255,883,424)
ສ່ວນຕ່າງຈາກການແລກປ່ຽນເງິນຕາ	-	-	(4,472,192)	-	(4,472,192)
ຍອດຫຼືອນະວັນທີ 31 ທັນວາ 2013	**175,883,224,873**	**743,381,401**	**2,021,468,915**	**6,405,389,264**	**185,053,464,453**

ກະກຽມໂດຍ:

ທ່ານ ນາງ ເດືອງ ທິ ທັນ ທຸຍ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ...

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2014

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ໃບລາຍງານກະແສເງິນສົດ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2013

	ເອກະສານ ຊ້ອນທ້າຍ	*2013 ກີບ*	*ສຳລັບໄລຍະແຕ່ວັນທີ 3/2/2012 ຫາ 31/12/2012 ກີບ*
ກຳໄລສຸດທິກັ່ງຫັກອາກອນ		**6,843,873,991**	**589,940,022**
ດັດແກ້ສຳລັບ:			
ລາຍຈ່າຍອາກອນກຳໄລ	19	2,161,223,366	231,400,830
ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ		1,339,231,871	377,463,115
ລາຍຈ່າຍເງິນແຮສຳລັບກິດຈະກຳສິນເຊື່ອ	13.2	1,301,915,850	1,098,869,012
ເກັ່ນຄືນລາຍຈ່າຍເງິນແຮສຳລັບກິດຈະກຳສິນເຊື່ອ	13.2	(255,883,424)	(115,782,866)
ກະແສເງິນສົດຈາກກຳໄລຈາກການດຳເນີນງານ ກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ		**11,390,361,654**	**2,181,890,113**
(ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ			
ຍອດເຫຼືອທີ່ມີກັບທະນາຄານອື່ນ		21,044,698,792	(44,863,332,753)
ສິນເຊື່ອໃຫ້ແກ່ລູກຄ້າ		(208,312,048,900)	(195,981,734,169)
ລາຍຮັບດອກເບ້ຍຄ້າງຮັບ		423,199,239	(863,836,133)
ຊັບສິນອື່ນໆ		(3,971,360,170)	(1,297,126,000)
ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນຈາກການດຳເນີນງານ			
ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ		222,056,806,251	107,742,549,232
ເງິນຝາກຂອງລູກຄ້າ		80,193,183,984	43,489,035,289
ອາກອນທີ່ຈ່າຍພາຍໃນປີ		(2,079,078,636)	(1,979,710)
ລາຍຈ່າຍດອກເບ້ຍຄ້າງຈ່າຍ		745,488,933	889,861,304
ໜີ້ສິນອື່ນໆ		(618,530,346)	942,438,337
ກະແສເງິນສົດສຸດທິຈາກການດຳເນີນງານ		**120,872,720,801**	**(87,762,234,490)**
ກິດຈະກຳດ້ານການລົງທຶນ			
ການຊື້ຊັບສິນບັດຄົງທີ່	14	(13,146,353,368)	(65,354,457,866)
ກະແສເງິນສົດສຸດທິໃຊ້ເຂົ້າໃນການລົງທຶນ		**(13,146,353,368)**	**(65,354,457,866)**

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີສິ້ນສຸດວັນທີ 31ທັນວາ 2013

	ເອກະສານ ຊ້ອນທ້າຍ	*2013 ກີບ*	*ສຳລັບໄລຍະແຕ່ວັນທີ 3/2/2012 ຫາ 31/12/2012 ກີບ*
ກິດຈະກຳການເງິນ			
ທຶນຈົດທະບຽນທີ່ຖອກເພີ່ມແລ້ວພາຍໃນປີ	20	-	76,180,105,010
ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນກິດຈະກຳການເງິນ		-	**76,180,105,010**
ການເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		**107,726,367,433**	**(76,936,587,346)**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		**22,763,355,051**	**99,703,119,863**
ສ່ວນຕ່າງຈາກການແລກປ່ຽນເງິນຕາຕ່າງປະເທດ		**(4,472,192)**	**(3,177,465)**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	**21**	**130,485,250,292**	**22,763,355,052**

ກະກຽມໂດຍ:

ທ່ານ ນາງ ເດືອງ ທິ ທັນ ທຸຍ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ເລ ເງາະ ນ້ຳ
ຜູ້ຈັດການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2014

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ

ເອກະສານຊ້ອນທ້າຍຂອງບົດລາຍງານການເງິນ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2013

1. ຂໍ້ມູນກ່ຽວກັບສາຂາ

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ ("ສາຂາ") ແມ່ນ ສາຂາທະນາຄານຕ່າງປະເທດ 100% ເຊິ່ງຈົດທະບຽນຢູ່ໃນ ສປປ ລາວ.

ການສ້າງຕັ້ງ ແລະ ການດຳເນີນງານ

ທະນາຄານ ຫຸ້ນສ່ວນອຸດສາຫະກຳ - ການຄ້າ ຫວຽດນາມ - ສາຂາລາວ ("ສາຂາ") ໄດ້ສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດລົງທຶນ ເລກທີ 4116 ໂດຍ ກະຊວງແຜນການ ແລະ ການລົງທຶນ ຂອງ ສປປ ລາວ ໃນວັນທີ 10 ພະຈິກ 2011 ແລະ ພາຍໃຕ້ໃບ ອະນຸຍາດດຳເນີນທຸລະກິດເລກທີ 068/ທຫລ ໂດຍ ທະນາຄານແຫ່ງ ສປປ ລາວ (ທຫລ) ໃນວັນທີ 27 ທັນວາ 2012. ສາຂາໄດ້ເລີ່ມເປີດໃຫ້ບໍລິການຢ່າງເປັນທາງການ ໃນວັນທີ 3 ກຸມພາ 2012.

ສາຂາມີທຶນປະກອບໃນເບື້ອງຕົ້ນແມ່ນ 99,703,119,863 ກີບ ແລະ ທຶນທີ່ໄດ້ຖອການະວັນທີ 31 ທັນວາ 2013 ແມ່ນ 175,883,224,873 ກີບ. (ນະວັນທີ 31ທັນວາ 2012: 175,883,224,873 ກີບ)

ການບໍລິການອັນຕົ້ນຕໍຂອງສາຂາແມ່ນລະດົມເງິນຝາກໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວຈາກອົງການຈັດຕັ້ງຕ່າງໆ ແລະ ບຸກຄົນ. ປ່ອຍເງິນກູ້ຢືມໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວໃຫ້ຫຼາຍພາກສ່ວນເຊັ່ນ: ອົງການຈັດຕັ້ງ ແລະ ບຸກຄົນ ຕາມຄວາມສາມາດທາງດ້ານແຫຼ່ງທຶນຂອງສາຂາ. ການດຳເນີນທຸລະກິດທີ່ກ່ຽວຂ້ອງກັບ ສະກຸນເງິນຕ່າງປະເທດ; ການ ບໍລິການທາງດ້ານການເງິນ ແລະ ການບໍລິການອື່ນໆທາງດ້ານທະນາຄານທີ່ໄດ້ຮັບການອະນຸຍາດຕາມທະນາຄານ ແຫ່ງ ສປປ ລາວ ວາງອອກ.

ສາຂາຕັ້ງຢູ່ບ້ານເລກທີ 029, ຖະໜົນ ຊຸນບຸລິມ, ເມືອງ ວັດຈັນ, ນະຄອນຫຼວງວຽງຈັນ, ສປປ ລາວ.

ຄະນະບໍລິຫານ

ຄະນະບໍລິຫານພາຍໃນປີ ແລະ ນະມື້ອອກ ບົດລາຍງານສະບັບນີ້ປະກອບດ້ວຍ:

ຊື່ ແລະ ນາມສະກຸນ	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ເລ ເງາະ ນ໋າ	ຜູ້ຈັດການສາຂາ	ແຕ່ງຕັ້ງວັນທີ 12 ທັນວາ 2012
ທ່ານ ຫງຽນ ສອນ ຫຸ່ງ	ຮອງຜູ້ຈັດການສາຂາ	ແຕ່ງຕັ້ງວັນທີ 12 ທັນວາ 2012
ທ່ານ ຫງຽນ ຕາຍ ຫງຽນ	ຮອງຜູ້ຈັດການສາຂາ	ແຕ່ງຕັ້ງວັນທີ 6 ກັນຍາ 2012

ພະນັກງານ

ນະວັນທີ 31 ທັນວາ 2013, ສາຂາມີພະນັກງານທັງໝົດແມ່ນ 50 ຄົນ (ນະວັນທີ 31 ທັນວາ 2012: 24 ຄົນ).

2. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍບັນຊີທີ່ສຳຄັນໄດ້ນຳໃຊ້ເຂົ້າໃນການກະກຽມບົດລາຍງານການເງິນລຸ່ມນີ້:

2.1. ບົດລາຍງານການປະຕິບັດຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການບັນຊີອື່ນໆທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໃຊ້ ໂດຍ ທະນາຄານແຫ່ງ ສປປ ລາວ.

ສະພາບໍລິຫານຂອງສາຂາໄດ້ມີການກະກຽມບົດລາຍງານ ໂດຍອີງຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ກົດ ລະບຽບການບັນຊີຂອງທະນາຄານທີ່ໄດ້ກຳນົດໃຊ້ໂດຍທະນາຄານ ແຫ່ງ ສປປ ລາວ.

2.2 ພື້ນຖານການກະກຽມບົດລາຍງານ

ສາຂາບັນທຶກບັນຊີເປັນເງິນກີບ ແລະ ໄດ້ກະກຽມບົດລາຍງານການເງິນເປັນຫົວໜ່ວຍກີບ ("ກີບ") ໂດຍອີງຕາມດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2010 ກ່ຽວກັບລະບົບການບັນຊີທີ່ນຳໃຊ້ໃນ ທຫລ ແລະ ສະຖາບັນການເງິນອື່ນໆ.

ບົດລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກ ຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນໄດ້ຮັບ,ໃບສະຫຼຸບຊັບສິນບັດ,ໃບລາຍງານການປ່ຽນແປງຂອງທຶນ,ໃບລາຍ ງານກະແສເງິນສົດ ແລະ ເອກະສານຊ້ອນທ້າຍໃນບົດລາຍງານ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮັບຮູ້ຫຼັກການບັນຊີ, ຂັ້ນ ຕອນ ແລະ ການປະຕິບັດການບັນຊີຂອງລາວ. ສະນັ້ນ ບົດລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນ ສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະ ເທດອື່ນນອກຈາກ ສປປ ລາວ.

2.3 ປີການບັນຊີ

ປີການບັນຊີຂອງສາຂາແມ່ນ ວັນທີ 1 ມັງກອນ ຫາ ວັນທີ 31 ທັນວາ.

2.4 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ

ດອກເບ້ຍລາຍຮັບ ແລະ ລາຍຈ່າຍໄດ້ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບບົນພື້ນຖານການຕັ້ງໜີ້ຄ້າງຮັບຄ້າງຈ່າຍ ໂດຍນຳໃຊ້ ວິທີການຄິດໄລ່ແບບສະເໜີຕົວ ແລະ ອັດຕາດອກເບ້ຍແມ່ນໄດ້ຖືກກຳນົດໄວ້ໃນສັນຍາເງິນກູ້ ແລະ ເງິນຝາກຂອງລູກຄ້າ.

ການຮັບຮູ້ດອກເບ້ຍຄ້າງຮັບຈະຖືກຢຸດຄິດໄລ່ກໍ່ຕໍ່ເມື່ອເງິນກູ້ກາຍເປັນໜີ້ທີ່ບໍ່ເກີດດອກອອກຜົນ ຫຼື ເມື່ອຜູ້ບໍລິຫານ ເຊື່ອວ່າຜູ້ ກູ້ຢືມບໍ່ມີຄວາມສາມາດຊຳລະຄືນໄດ້ທັງຕົ້ນທຶນ ແລະ ດອກເບ້ຍ. ລາຍຮັບດອກເບ້ຍເງິນກູ້ແມ່ນໄດ້ຖືກ ບັນທຶກເຂົ້າໃນໃບ ລາຍງານຜົນໄດ້ຮັບກໍ່ຕໍ່ເມື່ອໄດ້ຮັບເງິນຕົວຈິງ.

2.5 ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ

ຄ່າທຳນຽມ ແລະ ຄ່ານາຍໜ້າ ປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການໂອນທຶນ, ຄ່າທຳນຽມຈາກການແລກປ່ຽນເງິນຕາ ຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກການອອກໜັງສືຄ້ຳປະກັນທາງການເງິນ.

ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບບົນພື້ນຖານການຖືບັນຊີ ເງິນສົດ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ກຳໄລ/ຂາດທຶນສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

ກຳໄລ/ຂາດທຶນສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດປະກອບມີສ່ວນຜິດຕ່ຽງຈາກອັດຕາແລກປ່ຽນເງິນຕາທີ່ ເປັນຈິງ ແລະ ບໍ່ເປັນຈິງທີ່ເກີດຈາກການຊື້ຂາຍເງິນຕາຕ່າງປະເທດ ແລະ ການເຄື່ອນໄຫວຂອງລາຍການຊັບສິນ ແລະ ໜີ້ສິນທີ່ເປັນສະກຸນເງິນຕາຕ່າງປະເທດ. ກຳໄລ/ຂາດທຶນໄດ້ຖືກລາຍງານຜົນຕ່າງລະຫວ່າງຈຳນວນເງິນຕາ ທີ່ຖືກຕີມູນຄ່າເປັນເງິນກີບຕາມອັດຕາທ້າຍເດືອນ. ການແລກປ່ຽນເງິນຕາຕ່າງປະເທດໃນທ້າຍເດືອນແມ່ນໄດ້ ຖືກບັນທຶກເປັນລາຍຮັບ ຫຼື ລາຍຈ່າຍໃນປີການບັນຊີ.

2.7 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງເຊິ່ງມີ ໄລຍະລົງທຶນບໍ່ເກີນ 30 ວັນທີ່ສາມາດປ່ຽນເປັນເງິນສົດໄດ້ຢ່າງງ່າຍດາຍ ແລະ ເງິນຝາກຢູ່ກັບທະນາຄານ ອື່ນທີ່ມີກຳນົດບໍ່ເກີນ 30 ວັນ.

2.8 ເງິນກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ

ເງິນກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ຖືກລາຍງານຍອດຄ້າງຊຳລະລົບໃຫ້ ຄັ້ງແຮສະເພາະ ສຳລັບເງິນກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ໃນວັນທີ 31 ທັນວາ 2013.

2.9 ຄັ້ງແຮສະເພາະສຳລັບເງິນກູ້

ອີງຕາມຂໍ້ຕົກລົງເລກທີ 324/ທຫລ ໂດຍທະນາຄານແຫ່ງ ສປປ ລາວ ວັນທີ 19 ເມສາ 2011. ສາຂາໄດ້ ຮຽກຮ້ອງໃຫ້ມີການຈັດຊັ້ນເງິນກູ້ ແລະ ສ້າງເງິນແຮເງິນກູ້ທີ່ເກັບຄືນບໍ່ໄດ້. ດັ່ງນັ້ນ ເງິນກູ້ຈະຖືກຈັດຊັ້ນເປັນເງິນກູ້ ທີ່ເກີດດອກອອກຜົນ ຫຼື ເງິນກູ້ທີ່ບໍ່ເກີດດອກອອກຜົນອີງຕາມການຊຳລະຄືນດອກເບ້ຍ ແລະ ປັດໄຈທາງດ້ານ ຄຸນນະພາບອື່ນໆ. ເງິນກູ້ທີ່ຖືກຈັດປະເພດເປັນໜີ້ປົກກະຕິ ຫຼື ໜີ້ຄວນເອົາໃຈໃສ່ ເຊິ່ງໄດ້ຈັດປະເພດເປັນເງິນກູ້ທີ່ເກີດດອກອອກຜົນ. ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕ່ຳກວ່າມາດຕະຖານ ຫຼື ສົງໄສ ແລະ ໜີ້ສູນ ແມ່ນໄດ້ຖືກກຳນົດ ເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ.

ອີງຕາມຂໍ້ກຳນົດເລກທີ 324/ທຫລ ຄັ້ງແຮສະເພາະສຳລັບເງິນກູ້ຂອງລູກຄ້າແມ່ນໄດ້ຖືກສ້າງຂຶ້ນໂດຍການຄິດໄລ່ເອົາຍອດບັນຊີຄ້າງຊຳລະເງິນກູ້ແຕ່ລະລາຍການຄູນໃຫ້ອັດຕາຄັ້ງແຮທີ່ໄດ້ນຳໃຊ້ສຳລັບການຈັດຊັ້ນເງິນກູ້ຄືດັ່ງລຸ່ມນີ້:

ກຸ່ມ	*ຊັ້ນໜີ້*	*ອັດຕາຄັ້ງແຮສະເພາະ*
A	ໜີ້ປົກກະຕິ	0%
B	ໜີ້ຄວນເອົາໃຈໃສ່	0%
C	ໜີ້ຕ່ຳກວ່າມາດຕະຖານ	20%
D	ໜີ້ສົງໄສ	50%
E	ໜີ້ສູນ	100%

ການປ່ຽນແປງຄັ້ງແຮສະເພາະແມ່ນໄດ້ຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບເປັນ *"ການສ້າງຄັ້ງແຮສະເພາະ /(ເກັບຄືນ)ຄັ້ງແຮສະເພາະສຸດທິສຳລັບເງິນປ່ອຍກູ້ໃຫ້ລູກຄ້າ"*. ຄັ້ງແຮສະເພາະສະສົມແມ່ນໄດ້ຖືກບັນທຶກລົງ ໃນໃບສະຫຼຸບຊັບສົມບັດເປັນ *"ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ເງິນແຮສະເພາະສຸດທິ)"*.

ລາຍລະອຽດກ່ຽວກັບການຈັດຊັ້ນໜີ້ ແລະ ຄັ້ງແຮສະເພາະ ແລະ ຈຳນວນຄັ້ງແຮທີ່ສາຂາໄດ້ບັນທຶກ ໃນວັນທີ 31 ທັນວາ 2013 ແມ່ນໄດ້ລາຍງານຢູ່ໃນເອກະສານຊ້ອນທ້າຍ 13.2.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.10 *ຄັງແຮທົ່ວໄປສຳລັບເງິນກູ້*

ອີງຕາມຂໍ້ກຳນົດເລກທີ 324/ທຫລ, ສາຂາແມ່ນຕ້ອງຫັກຄັງແຮທົ່ວໄປສຳລັບການຂາດທຶນດ້ານສິນເຊື່ອໃນອັດຕາ 3.00% ຂອງຍອດໜີ້ປົກກະຕິ ແລະ ໜີ້ຄວນເອົາໃຈໃສ່ ນະວັນທີໃບສະຫຼຸບຊັບສິມບັດ ແລະ ຄັງແຮທົ່ວໄປສຳລັບໜີ້ປົກກະຕິຄວນອີງຕາມການແຈ້ງການຂອງ ທຫລ ໃນແຕ່ລະປີ. ສຳລັບປີສິ້ນສຸດ 31 ທັນວາ 2013, ອັດຕາຄັງແຮທົ່ວໄປສຳລັບ ໜີ້ປົກກະຕິ ແມ່ນຢູ່ໃນຊ່ວງ 0.50 ຫາ 1.00% ໂດຍອີງຕາມໜັງສືແຈ້ງການ ສະບັບເລກທີ 242/ທຫລ ອອກໂດຍ ທະນາຄານແຫ່ງ ສປປ ລາວ ລົງວັນທີ 02 ເມສາ 2011. ອີງຕາມນັ້ນ ສາຂາໄດ້ຫັກຄັງແຮທົ່ວໄປໃນອັດຕາ 0.50% ຂອງຍອດໜີ້ປົກກະຕິ.

ສາຂາໄດ້ປະຕິບັດຕາມລະບຽບການຂອງ ທະນາຄານແຫ່ງ ສປປ ລາວ ໃນເລື່ອງເງິນແຮທົ່ວໄປສຳລັບໜີ້ປົກກະຕິ ແລະ ໜີ້ຄວນເອົາໃຈໃສ່ສຳລັບປີສິ້ນສຸດ 31ທັນວາ 2013.

ອີງຕາມລະບຽບການບັນຊີທີ່ກ່ຽວຂ້ອງອອກໂດຍທະນາຄານແຫ່ງ ສປປ ລາວ, ການປ່ຽນແປງຂອງຄັງແຮຕາມລະບຽບການ ສຳລັບກິດຈະກຳສິນເຊື່ອແມ່ນໄດ້ບັນທຶກລົງໃນໃບລາຍງານຜົນໄດ້ຮັບເປັນ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍຄັງແຮຕາມລະບຽບການ, ແລະ "ລາຍຮັບຈາກການດຳເນີນງານ ອື່ນໆ", ສຳລັບ ການປັ໊ນກັບລາຍຈ່າຍເງິນແຮ ແລະ ຄັງເງິນແຮ ແມ່ນໄດ້ຖືກບັນທຶກຢູ່ໃນໃບສະຫຼຸບຊັບສິມບັດເປັນ "ຄັງແຮທົ່ວໄປສຳລັບວຽກງານສິນເຊື່ອ" ຢູ່ໃນທຶນ ແລະ ຄັງສະສົມຂອງສາຂາ.

ລາຍລະອຽດການປ່ຽນແປງ ຂອງຄັງແຮ ແມ່ນຖືກແຈ້ງໄວ້ຢູ່ໃນເອກະສານຊ້ອນທ້າຍ 13.2.

2.11 *ຊັບສິມບັດຄົງທີ*

ຊັບສິມບັດຄົງທີ່ລວມມີຊັບສິມບັດຄົງທີ່ມີຕົວຕົນ, ບໍ່ມີຕົວຕົນ ແລະ ສິດນຳໃຊ້ທີ່ດິນ. ຊັບສິມບັດຄົງທີ່ມີຕົວຕົນ ປະກອບມີ: ອາຄານ, ເຄື່ອງເຟີນີເຈີ້ ແລະ ເຄື່ອງຕິດຕັ້ງ, ເຄື່ອງໃຊ້ຫ້ອງການ, ພາຫານະ ແລະ ອື່ນໆ, ຊັບສິມບັດຄົງທີ່ບໍ່ມີຕົວຕົນປະກອບມີ: ໂປແກຼມຄອມພິວເຕີ.

ຊັບສິມບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ ຄ່າຫລຸ້ຍຫ້ຽນ ຫລື ຄ່າເຊື່ອມສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິມບັດປະກອບດ້ວຍມູນຄ່າຊື້ ບວກກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆໃນການເຮັດໃຫ້ຊັບສິນ ຢູ່ໃນ ສະພາບທີ່ພ້ອມໃຊ້ງານ.

ບັນດາຄ່າໃຊ້ຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງຄົນໃໝ່ສາມາດຈັດເຂົ້າເປັນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ສ້ອມແປງ, ສາມາດຈັດເຂົ້າ ແລະ ສະແດງຢູ່ໃນບົດລາຍງານຜົນໄດ້ຮັບຖ້າມີ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ ໃນໃບລາຍງານຜົນໄດ້ຮັບ.

ເມື່ອຊັບສິມບັດຖືກຂາຍ ຫລື ສະສາງອອກ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກຍ້າຍອອກຈາກໃບສະຫຼຸບຊັບສິມບັດ ແລະ ສ່ວນຕ່າງຈາກກຳໄລ ຫລື ຂາດທຶນຈາກການສະສາງຈະຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.12 ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ

ການຫັກຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມຂອງຊັບສິນບັດຄົງທີ່ແມ່ນຖືກຄິດໄລ່ແບບສະເໜີຕົວອີງຕາມອັດຕາກັບອາຍຸການນຳໃຊ້ ທີ່ສອດຄ່ອງກັບກົດໝາຍວ່ອຍສາອາກອນສະບັບເລກທີ 05 ລົງວັນທີ 20 ທັນວາ 2011 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງຈາກ ວັນທີ 1 ມັງກອນ 2013 ກຳນົດໂດຍປະທານສະພາແຫ່ງຊາດ. ອັດຕາປະຈຳປີທີ່ນຳໃຊ້ມີດັ່ງຕໍ່ໄປນີ້:

ສິດນຳໃຊ້ທີ່ດິນ	(*)
ອຸປະກອນ ເຄື່ອງໃຊ້ຫ້ອງການ	20%
ພາຫະນະ	20%

(*) ຄ່າເສື່ອມຂອງ ສິດນຳໃຊ້ທີ່ດິນ ແມ່ນອີງຕາມໄລຍະການເຊົ່າ, ສິດນຳໃຊ້ທີ່ດິນທີ່ບໍ່ໄດ້ກຳນົດໄລຍະ ຈະບໍ່ຖືກຫັກຄ່າ ເສື່ອມ.

2.13 ຄັງສຳຮອງຕາມລະບຽບການ

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ສາຂາຂອງທະນາຄານທຸລະກິດ ຕ່າງປະເທດໄດ້ຖືກຮຽກຮ້ອງໃຫ້ຕ້ອງຮັກສາກຳໄລສຸດທິຕາມຄັງສະສົມດັ່ງຕໍ່ໄປນີ້:

- ຄັງແຮຕາມລະບຽບການ,
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມລະບຽບຄວາມພຽງພໍຂອງທຶນ ສະບັບເລກທີ 01/ທຫລ ລົງວັນທີ 28 ສິງຫາ 2002 ເຊິ່ງອອກໂດຍທະນາຄານແຫ່ງ ສ.ປ.ປ ລາວ ແລະ ເອກະສານແນະນຳອື່ນໆທີ່ກ່ຽວຂ້ອງ, ສາຂາທະນາຄານຕ່າງປະເທດແມ່ນຕ້ອງໄດ້ມີຄັງສຳຮອງຕາມ ລະບຽບການໃນອັດຕາລະຫວ່າງ 5% ຫາ 10% ຂອງກຳໄລຫຼັງຫັກອາກອນ ໂດຍອີງຕາມຄວາມເຫັນດີຂອງສະພາບໍລິຫານ. ຄັງຂະຫຍາຍທຸລະກິດ ແລະ ອື່ນໆແມ່ນຂຶ້ນຕາມການຕັດສິນໃຈຂອງຄະນະບໍລິຫານ. ດັ່ງນັ້ນ ຄັງສຳຮອງຂອງສາຂາໃນປີ 2013 ແມ່ນມີດັ່ງນີ້:

	% ຂອງ ກຳໄລຫຼັງອາກອນ	*ມູນຄ່າສູງສຸດ*
ຄັງແຮຕາມລະບຽບການ	10%	ບໍ່ຈຳກັດ
ຄັງຂະຫຍາຍທຸລະກິດ	ອີງຕາມການຕັດສິນໃຈຂອງຄະນະບໍລິຫານ	ບໍ່ຈຳກັດ

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.14 ການເຄື່ອນໄຫວເປັນສະກຸນເງິນຕ່າງປະເທດ

ສາຂາໄດ້ປະຕິບັດຕາມລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ, ຊັບສິນທີ່ມີ ມູນຄ່າຄົງທີ່ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດໃນທ້າຍປີໄດ້ຖືກຕີມູນຄ່າເປັນເງິນກີບຕາມ ອັດຕາແລກປ່ຽນໃນມື້ສ້າງໃບສະຫຼຸບຊັບສິນບັດ (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ ເງິນກີບໃນວັນທີ 31 ທັນວາ 2012 ແມ່ນໄດ້ລາຍງານໃຫ້ເຫັນຂ້າງລຸ່ມ). ລາຍຮັບ ແລະ ລາຍຈ່າຍເກີດຈາກການແລກປ່ຽນເງິນຕາຕ່າງປະເທດພາຍໃນປີແມ່ນຖືກປ່ຽນເປັນເງິນກີບດ້ວຍອັດຕາແລກປ່ຽນໃນມື້ທີ່ມີການເຄື່ອນໄຫວເກີດຂຶ້ນ. ຄ່າຜິດຕ່ຽງຈາກການແລກປ່ຽນຊັບສິນທີ່ມີມູນຄ່າຄົງທີ່ ແລະ ໜີ້ສິນທາງການເງິນໃນມື້ສ້າງໃບສະຫຼຸບ ຊັບສິນບັດແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ.

	31 ທັນວາ 2013	*31 ທັນວາ 2012*
	ກີບ	*ກີບ*
ໂດລາ ສະຫະລັດ ("ໂດລາ")	8,016	8,007
ໄທ ບາດ("ໄທ ບາດ")	246.20	251.75

2.15 ອາກອນ

ອາກອນຖືກຄິດໄລ່ຈາກກຳໄລໃນປີປະຈຸບັນ ໂດຍອີງຕາມລະບຽບການຄຸ້ມຄອງການເກັບອາກອນໃນ ສປປ ລາວ. ທາງສາຂາຕ້ອງຈ່າຍອາກອນໃນອັດຕາ 24% ຂອງກຳໄລກ່ອນອາກອນ. ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 05/ສພຊ ລົງວັນທີ 20 ທັນວາ 2011, ເຊິ່ງມີຜົນບັງຄັບໃຊ້ນັບຕັ້ງແຕ່ 1 ມັງກອນ 2013. (2012: ທາງສາຂາຕ້ອງຈ່າຍອາກອນໜຶ່ງໃນມູນຄ່າທີ່ສູງກວ່າຂອງ 28% ຂອງກຳໄລກ່ອນອາກອນ ຫຼື ອາກອນຕ່ຳສຸດໃນມູນຄ່າ 1% ຂອງລາຍຮັບທັງໝົດພາຍໃນປີ ໂດຍອີງຕາມກົດໝາຍສ່ວຍສາອາກອນສະບັບເກົ່າ ເລກທີ 001 ລົງວັນທີ 1 ມີນາ 2011), ເຊິ່ງມີຜົນບັງຄັບໃຊ້ພາຍຫຼັງວັນທີ 1 ມັງກອນ 2013. ອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫລາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ,ຈຳນວນທີ່ໄດ້ຖືກລາຍງານຢູ່ໃນບົດລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

2.16 ຜົນຕອບແທນຂອງພະນັກງານ

ເງິນປະໂຫຍດຫຼັງອອກການ

ສາຂາໄດ້ຈັດຕັ້ງປະຕິບັດການຫັກເງິນໄວ້ໃນຄັງປະກັນສັງຄົມຂອງສາຂາໃນອັດຕາ 9.5% ຂອງເງິນ ເດືອນພື້ນຖານ ບໍ່ເກີນເພດານ 1,5 ລ້ານກີບ ໂດຍສາຂາປະກອບ 5% ຂອງເງິນເດືອນພື້ນຖານ ແລະ ຫັກຈາກເງິນເດືອນພະນັກງານ 4.5% ຂອງເງິນເດືອນພື້ນຖານ. ຄັງປະກັນສັງຄົມຂອງສາຂາຈະຖືກຈ່າຍໃຫ້ພະນັກງານຂອງສາຂາທີ່ອອກກິນບຳເນັດເປັນເງິນອຸດໜຸນຄັ້ງດຽວ. ໃນອະນາຄົດສາຂາຈະເລີ່ມຈັດຕັ້ງປະຕິບັດຕາມກົດລະບຽບຂອງອົງການປະກັນສັງຄົມ ໂດຍເຂົ້າຮ່ວມເປັນສະມາຊິກຂອງອົງການປະກັນສັງຄົມ.

ເງິນປະໂຫຍດພາຍຫຼັງຍົກເລີກສັນຍາຈ້າງງານ

ອີງຕາມມາດຕາ 29 ຂອງກົດໝາຍວ່າດ້ວຍແຮງງານສະບັບປັບປຸງທີ່ອອກໂດຍປະທານປະເທດຂອງ ສປປ ລາວ ໃນວັນທີ 16 ມັງກອນປີ 2007, ສາຂາມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຍ້ອນກໍລະນີດັ່ງລຸ່ມນີ້:

- ເມື່ອພະນັກງານບໍ່ມີສຸຂະພາບແຂງແຮງດັ່ງນັ້ນຈຶ່ງ ບໍ່ສາມາດເຮັດວຽກຕໍ່ໄດ້ຢ່າງເຕັມເມັດເຕັມໜ່ວຍ, ຫລື
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫລຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.16 ຜົນຕອບແທນຂອງພະນັກງານ (ຕໍ່)

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນອຸດໜູນເທື່ອດຽວໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານກ່ອນເລີກຈ້າງຄູນໃຫ້ຈຳນວນເດືອນເຮັດວຽກນາຍຈ້າງສຳລັບຜູ້ ທີ່ເຮັດວຽກຕ່ຳກວ່າ 3 ປີ. ສຳລັບຜູ້ທີ່ເຮັດວຽກເກີນ 3 ປີ ພື້ນຖານຄິດໄລ່ແມ່ນ 15% ຂອງເງິນເດືອນພື້ນຖານ, ນະວັນທີ 31 ທັນວາ 2013 ຍັງບໍ່ມີພະນັກງານຂອງສາຂາ ຜູ້ໃດທີ່ຖືກເລີກຈ້າງພາຍໃຕ້ຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ. ສະນັ້ນ, ທາງສາຂາ ແມ່ນບໍ່ໄດ້ຕັ້ງເງິນຊົດເຊີຍການເລີກຈ້າງໃນບົດລາຍງານການເງິນ.

3. ລາຍຮັບສຸດທິດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

	2013 *ກີບ*	*ໄລຍະແຕ່ວັນທີ* *3/2/2012 ຫາ* *31/12/2012* *ກີບ*
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	**24,127,448,457**	**8,874,545,671**
ລາຍຮັບດອກເບ້ຍເງິນຝາກກັບທະນາຄານອື່ນ	1,048,973,762	1,999,858,516
ລາຍຮັບດອກເບ້ຍຈາກລູກຄ້າ	23,078,474,695	6,874,687,155
ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ	**(5,886,296,457)**	**(2,549,145,007)**
ລາຍຈ່າຍດອກເບ້ຍການສຳລັບທະນາຄານອື່ນ	(4,587,279,960)	(1,389,917,316)
ລາຍຈ່າຍດອກເບ້ຍຈາກເງິນຝາກຂອງລູກຄ້າ	(1,299,016,497)	(1,159,227,691)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	**18,241,152,000**	**6,325,400,664**

4. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	2013 *ກີບ*	*ໄລຍະແຕ່ວັນທີ* *3/2/2012 ຫາ* *31/12/2012* *ກີບ*
ລາຍຮັບຈາກຄ່າທຳນຽມ ແລະ ບໍລິການຈາກ	**2,235,110,553**	**1,637,061,560**
ຄ່າທຳນຽມຈາກການສະສາງ	2,142,890,327	953,414,350
ລາຍຮັບເກັບຄືນ	91,785,281	683,426,210
ຄ່າທຳນຽມ ແລະ ການບໍລິການອື່ນໆ	434,945	221,000
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	**(142,833,014)**	**(80,553,553)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ການບໍລິການ	**2,092,277,539**	**1,556,508,007**

5. ກຳໄລສຸດທິ ຈາກການຊື້ຂາຍເງິນຕາຕ່າງປະເທດ

	2013 ກີບ	ໄລຍະແຕ່ວັນທີ 3/2/2012 ຫາ 31/12/2012 ກີບ
ກຳໄລຈາກການຊື້ຂາຍເງິນຕາຕ່າງປະເທດ	1,131,100,317	916,923,299
ຂາດທຶນຈາກການຊື້ຂາຍເງິນຕາຕ່າງປະເທດ	(102,754,581)	(310,491,469)
ກຳໄລສຸດທິ ຈາກການຊື້ຂາຍເງິນຕາ	**1,028,345,736**	**606,431,830**

6. ລາຍຮັບອື່ນໆຈາກການດຳເນີນງານ

	2013 ກີບ	ໄລຍະແຕ່ວັນທີ 3/2/2012 ຫາ 31/12/2012 ກີບ
ເກັບຄືນລາຍຈ່າຍເງິນແຮທົ່ວໄປຂອງກິດຈະກຳສິນເຊື່ອ (ເອກະສານຊ້ອນທ້າຍ 13.2)	255,883,424	115,782,866
	255,883,424	**115,782,866**

7. ເງິນເດືອນ ແລະ ລາຍຈ່າຍອື່ນໆໃຫ້ພະນັກງານ

	2013 ກີບ	ໄລຍະແຕ່ວັນທີ 3/2/2012 ຫາ 31/12/2012 ກີບ
ເງິນເດືອນ	3,221,280,766	2,436,793,858
ລາຍຈ່າຍອື່ນກ່ຽວກັບພະນັກງານ	1,588,369,164	1,025,540,866
	4,809,649,930	**3,462,334,724**

8. ລາຍຈ່າຍອື່ນໆຈາກການບໍລິຫານ

	2013 ກີບ	ໄລຍະແຕ່ວັນທີ 3/2/2012 ຫາ 31/12/2012 ກີບ
ຄ່າເຊົ່າຫ້ອງການ	320,040,000	346,710,000
ຄ່ານ້ຳມັນ	91,099,555	47,784,000
ຄ່າເຄື່ອງໃຊ້ຫ້ອງການ	290,003,346	123,276,838
ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	1,190,419,870	423,743,917
ຄ່າໂທລະຄົມມະນາຄົມ	151,220,250	101,238,085
ຄ່າສ້ອມແປງ ແລະ ບຳລຸງຮັກສາ	993,716,578	30,959,000
ຄ່າໄຟຟ້າ ແລະ ນ້ຳປະປາ	219,710,745	161,655,255
ຄ່າທຳນຽມກວດສອບ	468,036,034	410,469,544
ລາຍຈ່າຍຕ້ອນຮັບແຂກ	284,432,581	522,427,951
ລາຍຈ່າຍອື່ນໆ	1,153,084,732	675,851,074
	5,161,763,691	**2,844,115,664**

9. ລາຍຈ່າຍອື່ນໆໃນການດຳເນີນທຸລະກິດ

	2013 ກີບ	ໄລຍະແຕ່ວັນທີ 3/2/2012 ຫາ 31/12/2012 ກີບ
ລາຍຈ່າຍເງິນແຮທົ່ວໄປຂອງກິດຈະກຳສິນເຊື່ອ (ເອກະສານຊ້ອນທ້າຍ 13.2)	1,301,915,850	1,098,869,012
	1,301,915,850	**1,098,869,012**

10. ເງິນສົດໃນຄັງ

	31/12/2013 ກີບ	31/12/2012 ກີບ
ເງິນສົດໃນຄັງເປັນເງິນກີບ	1,158,630,000	1,244,799,000
ເງິນສົດໃນຄັງເປັນເງິນຕາຕ່າງປະເທດ	2,250,375,803	702,277,237
	3,409,005,803	**1,947,076,237**

11. ບັນຊີເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫຫລ")

	31/12/2013	*31/12/2012*
	ກີບ	*ກີບ*
ເງິນຝາກກະແສລາຍວັນ	66,645,973,733	17,255,726,907
ເງິນຝາກພາກບັງຄັບ	7,413,633,961	3,708,332,753
ເງິນຝາກພິເສດ	5,000,000	5,000,000
	74,064,607,694	**20,969,059,660**

ເງິນຝາກກັບທະນາຄານແຫ່ງ ສປປ ລາວ ລວມມີເງິນຝາກເພື່ອການຊຳລະສະສາງ (ເງິນຝາກກະແສລາຍວັນ), ເງິນຝາກພາກບັງຄັບ ແລະ ເງິນຝາກແບບພິເສດ. ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

ຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ, ສາຂາໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງເງິນສົດໄວ້ກັບທະນາຄານ ແຫ່ງ ສປປ ລາວ ໃນຮູບແບບເງິນຝາກພາກບັງຄັບ, ເຊິ່ງຖືກຄິດໄລ່ໃນອັດຕາ 5.00% (ສຳລັບເງິນກີບ) ແລະ 10.00% (ສຳລັບເງິນ ໂດ ລາ ແລະ ເງິນບາດ). ຄິດໄລ່ເຄິ່ງເດືອນເທື່ອໜຶ່ງ ໂດຍອີງໃສ່ຍອດເງິນຝາກຂອງລູກຄ້າ ເຊິ່ງມີກຳນົດຕ່ຳກ່ວາ 12 ເດືອນຫຼັງຈາກຫັກຍອດເຫຼືອຂອງເງິນສົດໃນຄັງເປັນເງິນກີບ, ບາດ ແລະ ໂດລາສະຫະລັດ.

ລະຫວ່າງປີການບັນທຶກສິ້ນສຸດນະວັນທີ 31 ທັນວາ 2013, ສາຂາໄດ້ຮັກສາເງິນຝາກພາກບັງຄັບເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດ ຂອງ ທະນາຄານແຫ່ງ ສປປ ລາວ.

12. ເງິນຝາກກັບທະນາຄານອື່ນ

12.1 *ເງິນຝາກກະແສລາຍວັນ*

	31/12/2013	*31/12/2012*
	ກີບ	*ກີບ*
ເງິນຝາກກະແສລາຍວັນກັບທະນາຄານພາຍໃນປະເທດ	4,756,351	4,823,053
ເງິນຝາກກະແສລາຍວັນກັບທະນາຄານຕ່າງປະເທດ	60,425,514,405	3,555,728,855
	60,430,270,756	**3,560,551,908**

12.2 *ເງິນຝາກມີກຳນົດ*

	31/12/2013	*31/12/2012*
	ກີບ	*ກີບ*
ເງິນຝາກມີກຳນົດກັບທະນາຄານພາຍໃນປະເທດ	16,400,000,000	41,150,000,000
- ທະນາຄານອິນດູຈີນ	*16,400,000,000*	*16,520,000,000*
- ທະນາຄານຫຸ້ນສ່ວນການຄ້າທະຫານ	-	*24,630,000,000*
ເງິນຝາກມີກຳນົດກັບທະນາຄານຕ່າງປະເທດ	-	-
	16,400,000,000	**41,150,000,000**

ເງິນຝາກມີກຳນົດກັບທະນາຄານ ອິນດູຈີນມີໄລຍະ 6 ເດືອນໃນອັດຕາດອກເບ້ຍ 5.00% ຕໍ່ປີ.

13. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຫຼັງຫັກເງິນແຮສະເພາະ)

	31/12/2013	*31/12/2012*
	ກີບ	*ກີບ*
ເງິນລ່ວງໜ້າໃຫ້ລູກຄ້າ (ເອກະສານຊ້ອນທ້າຍທີ່ 13.1)	404,293,783,069	195,981,734,169
ຫັກລົບເງິນແຮສະເພາະສຳລັບເງິນກູ້ (ເອກະສານຊ້ອນທ້າຍ13.1)	-	-
	404,293,783,069	**195,981,734,169**

13.1 ເງິນກູ້ໃຫ້ກັບລູກຄ້າ

ວິເຄາະເງິນກູ້ໃຫ້ລູກຄ້າຕາມສະກຸນເງິນ

	31/12/2013	*31/12/2012*
	ກີບ	*ກີບ*
ເງິນກູ້ ແລະ ເງິນລ່ວງໜ້າເປັນເງິນກີບ	90,573,571,983	103,463,350,077
ເງິນກູ້ ແລະ ເງິນລ່ວງໜ້າເປັນເງິນໂດລາ	313,720,211,086	92,518,384,092
	404,293,783,069	**195,981,734,169**

ເງິນກູ້ຢືມທາງການຄ້າມີເງິນເບີກເກີນບັນຊີ, ເງິນກູ້ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວເປັນເງິນກີບ ແລະ ໂດລາ. ເງິນກູ້ຢືມການຄ້າເປັນເງິນກີບ ແມ່ນມີອັດຕາດອກເບ້ຍແຕ່ 10.50% ຫາ 13.00% ຕໍ່ປີຂຶ້ນກັບ ຜະລິດຕະພັນເງິນກູ້ (2012: 11.00% ຫາ 16.00%). ເງິນກູ້ການຄ້າເປັນເງິນໂດລາ ມີອັດຕາດອກເບ້ຍແຕ່ 4.00 ຫາ 10.00% ຕໍ່ປີ (2012: 6.50% ຫາ 9.00% ຕໍ່ປີ)

ການວິເຄາະອີງຕາມຄຸນນະພາບສິນເຊື່ອ

	31/12/2013	*31/12/2012*
	ກີບ	*ກີບ*
ໜີ້ປົກກະຕິ	404,293,783,069	195,981,734,169
ໜີ້ຄວນເອົາໃຈໃສ່	-	-
ໜີ້ຕ່ຳກວ່າມາດຕະຖານ	-	-
ໜີ້ສົງໄສ	-	-
ໜີ້ສູນ	-	-
	404,293,783,069	**195,981,734,169**

13. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຫຼັງຫັກເງິນແຮສະເພາະສຸດທີ) (ຕໍ່)

13.2 ການເຄື່ອນໄຫວເງິນແຮສຳລັບໜີ້ເສຍ

ການປ່ຽນແປງຄ້ຳແຮສຳລັບໜີ້ເສຍຂອງສາຂາໃນໄລຍະປີ 2013 ມີດັ່ງນີ້:

	ຄ້ຳແຮສະເພາະ ກີບ	*ຄ້ຳແຮທົ່ວໄປ ກີບ*	*ລວມ ກີບ*
ຍອດນະວັນທີ 1 ມັງກອນ 2013	**-**	**979,908,681**	**979,908,681**
ເງິນແຮທີ່ຫັກເປັນລາຍຈ່າຍພາຍໃນປີ	-	1,301,915,850	1,301,915,850
ເກັບຄືນລາຍຈ່າຍເງິນແຮພາຍໃນປີ	-	(255,883,424)	(255,883,424)
ສ່ວນຕ່າງແລກປ່ຽນເງິນຕາ	-	(4,472,192)	(4,472,192)
ຍອດເຫຼືອນະວັນທີ 31 ທັນວາ 2013	**-**	**2,021,468,915**	**2,021,468,915**

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮຕາມຂໍ້ກຳນົດຂອງ ທຫລ ເລກທີ 324 ນະວັນທີ 31 ທັນວາ 2013 ມີດັ່ງຕໍ່ໄປນີ້:

ການຈັດສັນເງິນກູ້	*ຍອດເຫຼືອເງິນກູ້ ກີບ*	*ຄ້ຳແຮສະເພາະ ກີບ*	*ຄ້ຳແຮທົ່ວໄປ ກີບ*	*ຄ້ຳແຮລວມ ທັງໝົດ ກີບ*
ເງິນກູ້ທີ່ເກີດດອກອອກຜົນ	404,293,783,069	-	1,301,915,850	1,301,915,850
- *ໜີ້ປົກກະຕິ*	*404,293,783,069*	-	*1,301,915,850*	*1,301,915,850*
- *ໜີ້ຄວນເອົາໃຈໃສ່*	-	-	-	-
ເງິນກູ້ທີ່ບໍ່ເກີດດອກອອກຜົນ	-	-	-	-
ຍອດລວມ:	**404,293,783,069**	**-**	**1,301,915,850**	**1,301,915,850**

ເອກະສານຊ້ອນທ້າຍຂອງບົດລາຍງານການເງິນ (ຕໍ່)
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2013

14. ຊັບສິນບັດຄົງທີ່

14.1 ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ສຳລັບທ້າຍປີ ນະວັນທີ 31 ທັນວາ 2013 ມີດັ່ງລຸ່ມນີ້:

	ສິດນຳໃຊ້ທີ່ດິນ *ກີບ*	*ຍອດລວມ* *ກີບ*
ຕົ້ນທຶນ:		
ນະວັນທີ 1 ມັງກອນ 2013	62,423,550,000	62,423,550,000
ຊື້ເພີ່ມພາຍໃນປີ	8,850,960,000	8,850,960,000
ສະສາງອອກພາຍໃນປີ	-	-
ນະວັນທີ 31 ທັນວາ 2013	71,274,510,000	71,274,510,000
ຄ່າຫຼຸ້ຍຫ້ຽນສະສົມ:		
ນະວັນທີ 1 ມັງກອນ 2013	-	-
ຄ່າຫຼຸ້ຍຫ້ຽນພາຍໃນປີ	-	-
ນະວັນທີ 31 ທັນວາ 2013	-	-
ມູນຄ່າຕາມບັນຊີ:		
ນະວັນທີ 1 ມັງກອນ 2013	62,423,550,000	62,423,550,000
ນະວັນທີ 31 ທັນວາ 2013	71,274,510,000	71,274,510,000

ເອກະສານຊ້ອນທ້າຍຂອງບົດລາຍງານການເງິນ (ຕໍ່)
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2013

14. ຊັບສິນບັດຖືທີ່ (ຕໍ່)

14.2 ຊັບສິນບັດຖືທີ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນຖືທີ່ມີຕົວຕົນສຳລັບປີ ນະ ວັນທີ 31 ທັນວາ 2013 ມີດັ່ງນີ້:

	ເຄື່ອງໃຊ້ຫ້ອງການ ກີບ	*ພາຫະນະ ກີບ*	*ຍອດລວມ ກີບ*
ຕົ້ນທຶນ:			
ນະວັນທີ 1 ມັງກອນ 2013	1,831,168,655	1,424,589,049	3,255,757,704
ຊື້ເພີ່ມພາຍໃນປີ	3,090,112,196	-	3,090,112,196
ສະສາງອອກພາຍໃນປີ	-	-	-
ນະວັນທີ 31 ທັນວາ 2013	4,921,280,851	1,424,589,049	6,345,869,900
ຄ່າຫຼຸ້ຍຫ້ຽນສະສົມ:			
ນະວັນທີ 1 ມັງກອນ2013	480,432,904	221,880,049	702,312,953
ຄ່າຫຼຸ້ຍຫ້ຽນກ່ອນຮັບຈາກທະນາຄານແມ່	401,862,703	-	401,862,703
ຄ່າຫຼຸ້ຍຫ້ຽນພາຍໃນປີ	1,054,314,061	284,917,810	1,339,231,871
ນະວັນທີ 31 ທັນວາ 2013	1,936,609,668	506,797,859	2,443,407,527
ມູນຄ່າຕາມບັນຊີ:			
ນະວັນທີ 1 ມັງກອນ 2013	1,350,735,751	1,202,709,000	2,553,444,751
ນະວັນທີ 31 ທັນວາ 2013	2,984,671,183	917,791,190	3,902,462,373

15. ຊັບສິນອື່ນໆ

	31/12/2013 ກີບ	*31/12/2012 ກີບ*
ລາຍຈ່າຍຄ່າເຊົ່າຈ່າຍລ່ວງໜ້າ	4,310,363,308	1,253,490,000
ລາຍຈ່າຍຈ່າຍລ່ວງໜ້າອື່ນໆລໍຖ້າແບ່ງສ່ວນ	958,122,862	43,636,000
	5,268,486,170	**1,297,126,000**

16. ເງິນຝາກຈາກທະນາຄານອື່ນ

	31/12/2013	*31/12/2012*
	ກີບ	*ກີບ*
ເງິນຝາກກະແສລາຍວັນ	**147,878,966,158**	**1,160,139,574**
ເງິນຝາກກະແສລາຍວັນຈາກທະນາຄານພາຍໃນປະເທດ	3,590,950,129	722,224,245
ເງິນຝາກກະແສລາຍວັນຈາກທະນາຄານຕ່າງປະເທດ	144,288,016,029	437,915,329
ເງິນຝາກມີກຳນົດ	**147,123,680,000**	**106,582,409,658**
ເງິນຝາກມີກຳນົດຈາກທະນາຄານພາຍໃນປະເທດ	(5,000,000,000)	25,592,600,000
ເງິນຝາກບໍ່ມີກຳນົດຈາກທະນາຄານຕ່າງປະເທດ	142,123,680,000	80,989,809,658
ເງິນກູ້ຢືມຈາກທະນາຄານອື່ນ	**33,667,200,000**	**-**
ເງິນກູ້ຢືມຈາກທະນາຄານຕ່າງປະເທດ	33,667,200,000	-
ໜີ້ຕ້ອງສິ່ງອື່ນໆໃຫ້ທະນາຄານອື່ນ	**1,129,509,325**	**-**
	324,799,355,483	**107,742,549,232**

ເງິນຝາກແບບມີກຳນົດຈາກທະນາຄານພາຍໃນແມ່ນມາຈາກ ກອງທຶນປົກປ້ອງຜູ້ຝາກເງິນ ເຊິ່ງມີໄລຍະເວລາ 12 ເດືອນ ໃນອັດຕາດອກເບ້ຍ 9.00% ຕໍ່ປີ ສຳລັບເງິນກີບ. ເງິນຝາກແບບມີກຳນົດຈາກທະນາຄານຕ່າງປະເທດແມ່ນເງິນຝາກຈາກທະນາຄານຫຸ້ນສ່ວນການຄ້າທະຫານຫວຽດນາມ ເຊິ່ງມີໄລຍະເວລາ 3 ເດືອນ ແລະ 12 ເດືອນ ໃນອັດຕາດອກເບ້ຍ 2.00% ແລະ 7.00% ຕໍ່ປີ ຕາມລຳດັບ ສຳລັບເງິນກີບ.

17. ເງິນຝາກຈາກລູກຄ້າ

ຍອດເງິນຝາກຂອງລູກຄ້າ ແລະ ຈຳນວນເງິນທີ່ຕ້ອງສິ່ງໃຫ້ລູກຄ້າ ນະວັນທີ 31 ທັນວາ 2013 ມີດັ່ງນີ້:

	31/12/2013	*31/12/2012*
	ກີບ	*ກີບ*
ເງິນຝາກກະແສລາຍວັນ	**86,528,102,501**	**31,499,876,642**
ເງິນຝາກກະແສລາຍວັນ ສະກຸນເງິນກີບ	55,599,501,522	20,039,088,735
ເງິນຝາກກະແສລາຍວັນ ສະກຸນເງິນຕ່າງປະເທດ	30,928,600,979	11,460,787,907
ເງິນຝາກມັດຈຳ	**11,082,249,619**	**1,311,506,100**
ເງິນຝາກມັດຈຳ ສະກຸນເງິນກີບ	-	-
ເງິນຝາກມັດຈຳ ສະກຸນເງິນຕ່າງປະເທດ	11,082,249,619	1,311,506,100
ເງິນຝາກປະຢັດ	**5,672,479,787**	**1,988,757,667**
ເງິນຝາກປະຢັດ ສະກຸນເງິນກີບ	690,225,814	231,239,594
ເງິນຝາກປະຢັດ ສະກຸນເງິນຕ່າງປະເທດ	4,982,253,973	1,757,518,073
ເງິນຝາກມີກຳນົດ	**20,399,387,366**	**8,653,244,679**
ເງິນຝາກມີກຳນົດ ສະກຸນເງິນກີບ	870,162,327	493,906,833
ເງິນຝາກມີກຳນົດ ສະກຸນເງິນຕ່າງປະເທດ	19,529,225,039	8,159,337,846
ໜີ້ຕ້ອງສິ່ງອື່ນໆໃຫ້ແກ່ລູກຄ້າ	-	**35,650,201**
	123,682,219,273	**43,489,035,289**

17. ເງິນຝາກຈາກລູກຄ້າ (ຕໍ່)

ບັນຊີເງິນຝາກປະຢັດຂອງລູກຄ້າທີ່ເປັນເງິນກີບ, ໂດລາສະຫະລັດ ແລະ ໄທບາດ ມີດອກເບ້ຍ 3.50%, 1.55% ແລະ 0.50% ຕໍ່ປີ ຕາມລຳດັບ.

ບັນຊີເງິນຝາກມີກຳນົດທຶນເປັນກີບ ມີໄລຍະເວລາຝາກ ແຕ່ 3, 6, 12 ແລະ 24 ເດືອນ ແລະ ອັດຕາດອກເບ້ຍ ແຕ່ 6.00% ຫາ 10.00% ຕໍ່ປີ (2012: 6.00% ຫາ 9.00%). ເງິນຝາກທີ່ເປັນເງິນຕາຕ່າງປະເທດໃນໄລຍະເວລາຝາກເທົ່າກັນຈະມີອັດຕາດອກເບ້ຍແຕ່ 4.00% ຫາ 7.00% ຕໍ່ປີ (2012: 1.75% ຫາ 3.25%) ສຳລັບເງິນຝາກສະກຸນເງິນໂດລາ ແລະ 0.75% ຫາ 4.00% (2012: 1.50%) ສຳລັບເງິນຝາກສະກຸນເງິນໄທບາດ.

18. ອາກອນ

ສາຂາມີພັນທະຕ້ອງຈ່າຍອາກອນ ໃນອັດຕາ 24% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍວ່ອຍສາອາກອນ ສະບັບເລກທີ 05 ລົງວັນທີ 20 ທັນວາ 2011 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງຈາກວັນທີ 01 ມັງກອນ 2013 (ປີ 2012: ສາຂາມີພັນທະຕ້ອງຈ່າຍໃນຈຳນວນທີ່ຫຼາຍກວ່າໃນອັດຕາ 28% ຂອງກຳໄລທັງໝົດກ່ອນອາກອນ ແລະ 1% ຂອງລາຍຮັບທັງໝົດ ຖ້າຫາກວ່າສາຂາແຈ້ງຂາດທຶນ ຫຼື ກຳໄລ ບໍ່ເຖິງລະດັບ ອັດຕາອາກອນກຳໄລ ໂດຍອີງຕາມກົດໝາຍວ່ອຍສາອາກອນສະບັບເກົ່າ ເລກທີ 001 ລົງວັນທີ 01 ມີນາ 2011 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງຈາກວັນທີ 01 ມັງກອນ 2012).

	2013 *ກີບ*	*ນັບແຕ່ໄລຍະວັນທີ 3/2/2012 ຫາ 31/12/2012* *ກີບ*
ກຳໄລກ່ອນອາກອນ	**9,005,097,357**	**821,340,852**
ລາຍຈ່າຍທີ່ບໍ່ສາມາດໃຫ້ຫັກ	-	-
ກຳໄລທີ່ຕ້ອງຈ່າຍອາກອນ	**9,005,097,357**	**821,340,852**
ອາກອນກຳໄລ ອັດຕາ 24% (2012: 28%)	**2,161,223,366**	**231,400,830**
ອາກອນຕ້ອງຈ່າຍໃນຕົ້ນປີ	229,421,120	-
ອາກອນຈ່າຍພາຍໃນປີ	(2,079,078,636)	(1,979,710)
ອາກອນຕ້ອງຈ່າຍທ້າຍປີ	**311,565,850**	**229,421,120**

ເນື່ອງຈາກການນຳໃຊ້ກົດໝາຍອາກອນ ແລະ ລະບຽບການເຄື່ອນໄຫວຕ່າງໆແມ່ນມີຫຼາຍປະເພດເຊິ່ງອາດຈະແປຄວາມໝາຍໄດ້ຫຼາຍຢ່າງ, ຈຳນວນທີ່ລາຍງານໃນບົດລາຍງານການເງິນອາດມີການປ່ຽນແປງຂຶ້ນກັບການໄຕ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

19. ໜີ້ຕ້ອງສົ່ງອື່ນໆ

	31/12/2013	*31/12/2012*
	ກີບ	*ກີບ*
ລາຍຈ່າຍໃຫ້ກັບທະນາຄານແມ່ສຳລັບຊື້ຊັບສິນ	-	385,000,000
ໜີ້ຕ້ອງສົ່ງໃຫ້ປະກັນສັງຄົມ	241,581,821	-
ໂບນັດ ແລະ ຄ່າງສະຫວັດດີການ	213,348,348	-
ໜີ້ສິນອື່ນໆ	153,901,166	557,438,337
	608,951,335	**942,438,337**

20. ທຶນທີ່ຖອກແລ້ວ

ການເຄື່ອນໄຫວຂອງທຶນທີ່ຖອກແລ້ວພາຍໃນປີ 2013 ມີດັ່ງລຸ່ມນີ້:

	2013	*ນັບແຕ່ໄລຍະວັນທີ 3/2/2012 ຫາ 31/12/2012*
	ກີບ	*ກີບ*
ຍອດຍົກມາ	175,883,224,873	99,703,119,863
ສ່ວນເພີ່ມຂອງທຶນພາຍໃນປີ	-	76,180,105,010
ຍອດເຫຼືອ	**175,883,224,873**	**175,883,224,873**

21. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	31/12/2013	*31/12/2012 ປັບປຸງ*
	ກີບ	*ກີບ*
ເງິນສົດໃນກຳມື	3,409,005,803	1,947,076,237
ບັນຊີເງິນຝາກກະແສລາຍວັນຢູ່ກັບທະນາຄານແຫ່ງ ສປປ ລາວ	66,645,973,733	17,255,726,907
ບັນຊີເງິນຝາກກະແສລາຍວັນຢູ່ກັບທະນາຄານອື່ນ	60,430,270,756	3,560,551,908
	130,485,250,292	**22,763,355,052**

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນລວມທຸກລາຍການເຄື່ອນໄຫວທີ່ກ່ຽວຂ້ອງກັບ ສາຂາ. ພາກສ່ວນດັ່ງກ່າວແມ່ນຈະມີສ່ວນກ່ຽວຂ້ອງກັບສາຂາຖ້າວ່າ:

(a) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນນີ້:

- ຄວບຄຸມ ຫຼື ຖືກຄວບຄຸມພາຍໃຕ້ການຄວບຄຸມຂອງສາຂາ (ນີ້ລວມມີສຳນັກງານໃຫຍ່ ແລະ ສາຂາ);
- ມີທຶນຈົດທະບຽນນຳສາຂາ ແລະ ດັ່ງນັ້ນຈຶ່ງມີສິດທີ່ສຳຄັນຕໍ່ສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(b) ພາກສ່ວນດັ່ງກ່າວແມ່ນຜູ້ຮ່ວມຫຸ້ນທີ່ສາຂາເປັນຜູ້ຖືຫຸ້ນ;

(c) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງ ຝ່າຍບຸກຄະລາກອນຢູ່ໃນສາຂາ ຫຼື ບໍລິສັດແມ່;

(d) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (a) ຫຼື (d);

(e) ພາກສ່ວນທີ່ກ່ຽວຂ້ອງກໍ່ແມ່ນຜູ້ທີ່ຄວບຄຸມສາຂາ, ມີການຄວບຄຸມຮ່ວມກັນ ຫຼື ໄດ້ມີການສົ່ງຜົນສະທ້ອນທີ່ສຳຄັນໂດຍ ຫຼື ສິດທິອຳນາດການໃນການອອກສຽງທີ່ສຳຄັນ ທີ່ສາຂາດຳເນີນທຸລະກິດຢູ່, ໂດຍທາງກົງ ຫຼື ທາງອ້ອມ, ທຸກໆ ພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (c) ຫຼື (d); ຫຼື

(f) ພາກສ່ວນທີ່ກ່ຽວຂ້ອງແມ່ນກ່ຽວຂ້ອງກັບຜົນປະໂຫຍດຫຼັງການເຮັດວຽກສຳລັບຜົນປະໂຫຍດຂອງພະນັກງານ ພາກສ່ວນກ່ຽວຂ້ອງຂອງສາຂາ.

ລາຍການເຄື່ອນໄຫວທີ່ສຳຄັນທີ່ກ່ຽວກັນກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2013 ມີດັ່ງລຸ່ມນີ້:

ພາກສ່ວນກ່ຽວຂ້ອງ	*ສາຍສຳພັນ*	*ການເຄື່ອນໄຫວ*	*ຈຳນວນ(*)*
ທະນາຄານຫຸ້ນສ່ວນ ການຄ້າຫວຽດຕິນ	ທະນາຄານແມ່	ເງິນຝາກຢູ່ທະນາຄານຫວຽດຕິນ	57,735,641,718
		ເງິນຝາກຈາກທະນາຄານຫວຽດຕິນ	143,850,100,700
		ໜີ້ຕ້ອງສິ່ງອື່ນໆໃຫ້ທະນາຄານຫວຽດຕິນ	1,129,509,325

(*): ການເຄື່ອນໄຫວເງິນຕາຕ່າງປະເທດທີ່ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນທ້າຍເດືອນ.

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2013 ມີດັ່ງນີ້:

ພາກສ່ວນກ່ຽວຂ້ອງ	*ສາຍສຳພັນ*	*ເນື້ອໃນ*	*ໜີ້ຕ້ອງຮັບ*	*ໜີ້ຕ້ອງສົ່ງ*
ທະນາຄານຫຸ້ນສ່ວນ ການຄ້າຫວຽດຕິນ	ບໍລິສັດແມ່	ເງິນຝາກກະແສລາຍວັນ	60,425,514,405	-
		ເງິນຝາກມີກຳນົດ	-	144,288,016,029
		ໜີ້ຕ້ອງສິ່ງອື່ນໆ	-	1,129,509,325

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຜົນຕອບແທນໃຫ້ຄະນະບໍລິຫານສາຂາມີດັ່ງນີ້:

	2013 *ກີບ*	*ນັບແຕ່ໄລຍະວັນທີ 3/2/2012 ຫາ 31/12/2012* *ກີບ*
ເງິນເດືອນ	1,690,800,000	590,573,760
ໂບນັດ ແລະ ຜົນຕອບແທນອື່ນໆ	11,620,800	43,016,400
	1,702,420,800	**633,590,160**

23. ການສະແດງຄືນຕົວເລກທີ່ກ່ຽວຂ້ອງ

ໃນລາຍງານກະແສເງິນສົດຂອງປີຜ່ານມາໄດ້ມີການປັບປຸງຕົວເລກດັ່ງລຸ່ມນີ້:

ແຍກອອກຈາກໃນລາຍງານກະແສເງິນສົດສຳລັບປີສິ້ນສຸດ 31 ທັນວາ 2012:

ລາຍການ	*2012 ໄດ້ລາຍງານ* *ກີບ*	*ການປັບປຸງ* *ກີບ*	*2012 ປັບປຸງ* *ກີບ*	*ໝາຍ ເຫດ*
ເງິນຝາກຢຸ່ ທຫລ	-	(3,713,332,753)	(3,713,332,753)	(i)
ກະແສເງິນສົດສຸດຫຼັ່ງຈາກກິດຈະກຳ ການດຳເນີນງານ	**(84,048,901,737)**	**(3,713,332,753)**	**(87,762,234,490)**	
ຫຼຸດລົງສຸດທິຂອງເງິນສົດ ແລະ ທຽບ ເທົ່າເງິນສົດ	**(73,223,254,593)**	**(3,713,332,753)**	**(76,936,587,346)**	
ເງິນສົດ ແລະ ທຽບເທົ່າເງິນສົດໃນ ຕົ້ນປີ	**99,703,119,863**	**-**	**99,703,119,863**	**(i)**
ເງິນສົດ ແລະ ທຽບເທົ່າເງິນສົດໃນ ທ້າຍປີ	**26,476,687,805**	**(3,713,332,753)**	**22,763,355,052**	

(i) ຍ້າຍເງິນຝາກພາກບັງຄັບຢຸ່ ທຫລ ອອກຈາກ ເງິນສົດ ແລະ ທຽບເທົ່າເງິນສົດ ນະວັນທີ 31 ທັນວາ 2012.

24. ເຫດການຫຼັງວັນທີຂອງໃບສະຫຼຸບຊັບສິນບັດ

ນອກຈາກຂໍ້ມູນທີ່ໄດ້ເປີດເຜີຍໃນບົດລາຍງານການເງິນ, ໃນມື້ທີ່ບົດລາຍງານການເງິນໄດ້ຖືກສ້າງຂຶ້ນ ບໍ່ໄດ້ມີເຫດການໃດທີ່ ສຳຄັນເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2013 ທີ່ສົ່ງຜົນກະທົບຕໍ່ຖານະທາງການເງິນ ຂອງສາຂາ ໃນວັນທີ 31 ທັນວາ 2013.

ກະກຽມໂດຍ:

ທ່ານ ນາງ ເດືອງ ທີ ທັນ ທຸຍ
ຫົວໜ້າບັນຊີ

ນະຄອ ຫຼວງວຽງຈັ , ສປປ ລາວ
31 ມີ ຕ 2014

ອະນຸມັດໂດຍ:

ທ່ານ ເງາະ ນ່ຳ
ຜູ້ຈັດການສາຂາ